ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 48 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 21 ທັນວາ 2015

ສຳນັກງານ ຄຄຊ
ເລກທີ...1321...
ວັນທີ..22 DEC 2015
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ

ທີ 23/11/2015 ຫາ 27/11/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

ຂອງທະນາຄານແຫ່ງ ສປປ ລາວ

I. <u>ວຽກງານການເມືອງແນວຄິດ</u>

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ,

II. <u>ວຽກງານວິຊາສະເພາະ</u>

1. <u>ສະພາບເສດຖະກິດເງິນຕາສາກົນ</u>

1.1 <u>ອັດຕາແລກປ່ຽນສາກົນ</u>

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ ພາຍຫຼັງຕົວເລກຜົນຜະລິດໃນໂຮງງານຂອງ ສ.ອາເມລິກາໃນເດືອນ 10/2015 ເພີ່ມຂຶ້ນ 0,4% ທຽບໃສ່ເດືອນຜ່ານມາ. ສະກຸນເງິນໃນພາກພື້ນອາຊີ ແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນດັດຊະນີຄວາມເຊື່ອໝັ້ນຂອງທຸລະກິດຂະໜາດນ້ອຍຂອງຍີ່ປຸ່ນເພີ່ມຂຶ້ນເປັນ 49,9 ໃນເດືອນ 11/2015 ຈາກ 48,7 ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 17/11/2015 | ອາທິດນີ້ 24/11/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---:|---:|---:|
| ເອີໂຣ/ໂດລາ | 1,0661 | 1,0638 | 0,22% |
| ໂດລາ/ເຢນ | 123,32 | 122,67 | 0,53% |
| ໂດລາ/ບາດ | 35,96 | 35,81 | 0,42% |
| ໂດລາ/ເປໂຊ | 47,14 | 47,09 | 0,11% |
| ໂດລາ/ຣູເປັຍ | 13.732,11 | 13.706,67 | 0,19% |
| ໂດລາ/ໂດລາສິງກະໂປ | 1,4228 | 1,4149 | 0,56% |
| ໂດລາ/ຢວນ | 6,3742 | 6,3883 | -0,22% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 1,58% ຈາກ 42,80 ໂດລາ/ບາເຣວ ມາເປັນ 43,48 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງ ສ. ອາເມລິກາ ເພີ່ມຂຶ້ນ ເນື່ອງຈາກຕົວເລກທາງດ້ານເສດຖະກິດອອກມາດີດັ່ງທີ່ກ່າວມາຂ້າງເທິງນັ້ນ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,88% ຈາກ 1.080,86 ໂດລາ/ອອນ ມາເປັນ 1.071,31 ໂດລາ/ອອນ ຍ້ອນນັກລົງທຶນຫຼຸດຜ່ອນການລົງທຶນໃນຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,05% ສຳລັບອັດຕາ ທຫລ ແຕ່ຄົງທີ່ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,49% ສຳລັບອັດຕາ ທຫລ ແລະ ອ່ອນຄ່າລົງ 0,20% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,96% ສຳລັບອັດຕາ ທຫລ ແລະ ອ່ອນຄ່າລົງ 1,03% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 7,79 ສຳລັບອັດຕາ ທຫລ ແລະ ແຂງຄ່າຂຶ້ນ 9,58% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 17/11/2015 | | | ອາທິດນີ້ 24/11/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.146,65 | 8.180,64 | 8.160,25 | 8.152,37 | 8.179,95 | 8.156,23 | -0,07% | 0,01% | 0,05% |
| ບາດ | 228,49 | 228,83 | 228,75 | 228,32 | 229,99 | 229,87 | 0,08% | -0,50% | -0,49% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.149,52 | 8.240,80 | 8.195,16 | 8.150,92 | 8.239,40 | 8.195,16 | -0,02% | 0,02% | 0,00% |
| ບາດ | 228,59 | 229,69 | 229,14 | 229,14 | 230,07 | 229,60 | -0,24% | -0,17% | -0,20% |
| ຜົດຕ່າງອັດຕາ ທຫລ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,04% | 0,74% | 0,43% | -0,02% | 0,73% | 0,48% | | | |
| ບາດ | 0,04% | 0,37% | 0,17% | 0,36% | 0,03% | -0,12% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 1,64% ທຽບໃສ່ວັນທີ 20/11/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 26,61%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,80% ເມື່ອທຽບໃສ່ວັນທີ 20/11/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 20,92%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 23/11/2015) ເຫັນວ່າ ທຫລ ຂາຍໂດລາສຸດທິ 86,89 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 58,44 ລ້ານໂດລາ ແລະ ຂາຍໂດລາໄດ້ 145,33 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 954,97 ລ້ານບາດ (ໃນນີ້ ຊື້ບາດໄດ້ 227,71 ລ້ານບາດ ແລະ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫລ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ຂາຍບາດໄດ້ 1.182,68 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 16,30% ແຕ່ຫຼຸດລົງ 33,74% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 5,16 ລ້ານໂດລາ ແລະ ເງິນບາດມີຈໍານວນ 57,80 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈໍານວນ 7,88 ລ້ານໂດລາ ແຕ່ຊື້ບາດສຸດທິ ຈໍານວນ 22 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 23,78 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈໍານວນ 1.204,14 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 17/11/2015 | | ອາທິດທີ 23/11/2015 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 11,72 | 156,66 | 14,98 | 135,16 | 27,76% | -13,72% |
| - ທ/ຄທຸລະກິດອື່ນໆ | 108,35 | 120,33 | 43,46 | 92,55 | -59,89% | -23,09% |
| ລວມຊື້: | **120,08** | **276,99** | **58,44** | **227,71** | **-51,33%** | **-17,79%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 19,66 | 135,38 | 120,17 | 136,56 | 511,38% | 0,88% |
| - ທ/ຄທຸລະກິດອື່ນໆ | 35,47 | 1.716,06 | 25,16 | 1.046,12 | -29,08% | -39,04% |
| ລວມຂາຍ: | **55,13** | **1.851,44** | **145,33** | **1.182,68** | **163,61%** | **-36,12%** |
| ຊື້-ຂາຍສຸດທິ ທທກ | **64,95** | **-1.574,45** | **-86,89** | **-954,97** | **-233,78%** | **-39,35%** |
| ຜິດດ່ຽງ ຊື້-ຂາຍ | 54,09 | -568,42 | -148,68 | -419,39 | -2.027,65% | 1.490,76% |
| ມູນຄ່າການຊື້-ຂາຍ | **175,21** | **2.128,43** | **203,77** | **1.410,39** | **16,30%** | **-33,74%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 16,52 | 22,00 | | |
| - ທຫລ ຂາຍໃຫ້ ທທກ | 30,50 | 0,00 | 8,64 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-30,50** | **0,00** | **7,88** | **22,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **1,65** | **32,00** | **5,16** | **57,80** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,27 | 797,87 | 0,27 | 1.204,14 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 21,68 | 0,00 | 24,05 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-21,40** | **797,87** | **-23,78** | **1.204,14** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 11/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,39% ເພີ່ມຂຶ້ນ 0,07% ຈາກ 1,32% ໃນເດືອນ 10/2015 ຍ້ອນລາຄາໝາກໄມ້, ຜັກສົດ, ປະເພດອາຫານສຸກ ແລະ ໝວດທີ່ພັກອາໄສ ຄາດວ່າຈະມີທ່າອ່ຽງເພີ່ມສູງຂຶ້ນ ເນື່ອງຈາກເປັນໄລຍະຂອງການໃຊ້ຈ່າຍງານສະເຫຼີມສະຫຼອງບຸນປະເພນີຕ່າງໆ.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 126,86 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 12,5% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 618 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 20,25% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 251,26 ຕື້ກີບ ຫຼຸດລົງ 58,15% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (13-19/11/2015) ມີຈຳນວນ 1.938 ຄັ້ງ .ໂດຍມີມູນຄ່າ 652,85 ຕື້ກີບ ຫຼຸດລົງ 1,8% ຊຶ່ງທະນາຄານພັດທະນາລາວ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 493 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.238,56 ຈຸດ ເພີ່ມຂຶ້ນ 0,34% ເມື່ອທຽບໃສ່ອາທິດຜ່ານມາ. ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 878.997 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,40 ຕື້ກີບ ເພີ່ມຂຶ້ນ 65,67% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 55,17% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.261 ກີບ/ຮຸ້ນ ຫຼຸດລົງ 271 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 97.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 513,43 ລ້ານກີບ ເພີ່ມຂຶ້ນ 290,31% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 70,64% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,76%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.286 ກີບ/ຮຸ້ນ ເພີ່ມຂຶ້ນ 84 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 776.797 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,88 ຕື້ກີບ ເພີ່ມຂຶ້ນ 57,69% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 36,26% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,82%[3].

ຮຸ້ນຂອງບໍລິສັດ ລາວເວິນ ມະຫາຊົນ (LWPC) ມີລາຄາປິດທີ່ 7.300 ກີບ/ຮຸ້ນ ຊຶ່ງໃນອາທິດນີ້ ບໍ່ມີການຈັບຄູ່ຊື້-ຂາຍຮຸ້ນ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.847 ກີບ/ຮຸ້ນ ເພີ່ມຂຶ້ນ 47 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 4.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 13,09 ລ້ານກີບ ເພີ່ມຂຶ້ນ 2.238,39%. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 66,67% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,67%[5].

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການຮັບເອົາສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກເມືອງຣົ່ມ ເຂົ້າເປັນສະມາຊິກ;
- ສຳເລັດ
- ສຳເລັດການຮັບຮອງຂໍ້ຕົກລົງທຸລະກຳໂອນເງິນ ທີ່ມີມູນຄ່າເກີນກຳນົດ;
- ສຳເລັດການສະເໜີຫາອົງການໄອຍະການ ປະຊາຊົນສູງສຸດ ກ່ຽວກັບການມາເຮັດວຽກກັບຊ່ຽວຊານ UNODC ແລະ ຝຶກອົບຮົມກ່ຽວກັບການຈັດຕັ້ງປະຕິບັດແຜນການດຳເນີນງານ;
- ສຳເລັດການຈັດສຳມະນາ ແລະ ຝຶກອົບຮົມ: ❶ສຳມະນາຮ່ວມກັບສຳນັກງານ ຄຄຊ ໃນຫົວຂໍ້: "ຫຼັກການຄຸ້ມຄອງບໍລິຫານສຳລັບສະພາບໍລິຫານ" ທີ່ ສປປ ລາວ, ❷ຝຶກອົບຮົມ ໃນຫົວຂໍ້: "ການສົ່ງບົດລາຍງານຕາມແບບຟອມຂອງ ທຫລ ແລະ ການເຜີຍແຜ່ຂໍ້ມູນຂ່າວສານສິນເຊື່ອ ໃຫ້ບັນດາໂຮງຊວດຈຳ ແລະ ບໍລິສັດ ເຊົ່າສິນເຊື່ອ" ທີ່ ທຫລ, ❸ຝຶກອົບຮົມຫົວຂໍ້: "ທັກສະການເປັນຜູ້ນຳຍຸກໃໝ່" ທີ່ ສທຄ, ❹ສຳມະນາດ້ານວິຊາການ ໃນຫົວຂໍ້: "ຄວາມຮູ້ພື້ນຖານກ່ຽວກັບວຽກງານບັນຊີທຸລະກິດ" ທີ່ ທຫລ;
- ສຳເລັດການເຂົ້າຮ່ວມສຳມະນາ ໃນຫົວຂໍ້ "ທັກສະໃນການສື່ສານ ທີ່ໂຮງແຮມເສດຖາປາລາສ" ຈັດໂດຍກະຊວງການຕ່າງປະເທດ;
- ສຳເລັດການຕ້ອນຮັບຄະນະຈາກທະນາຄານກຸງສີ ທີ່ເຂົ້າຢ້ຽມຂໍ່ານັບ ທ່ານ ຮອງຜູ້ວ່າການ ທຫລ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈຳນວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າລະບຽບກ່ຽວກັບການປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ສືບຕໍ່ຄົ້ນຄວ້າໂຄງສ້າງຂອງຮ່າງດຳລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນສິນເຊື່ອ, ❹ຄົ້ນຄວ້າການສັງລວມແບບຟອມລາຍງານຂອງລະບົບໃຫ້ມີຄວາມກະທັດຮັດ ເພື່ອເຮັດໃຫ້ເນື້ອທີ່ຄວາມຈຸຂອງຂໍ້ມູນໃນຖານຂໍ້ມູນຈັດເກັບຂໍ້ມູນໄດ້ຢ່າງເປັນລະບຽບຂຶ້ນ ແລະ ເຮັດໃຫ້ລະບົບດຳເນີນງານໄດ້ຢ່າງຄ່ອງໂຕຂຶ້ນ;
- ສືບຕໍ່ປັບປຸງດຳລັດວ່າດ້ວຍລະບົບຊຳລະແຫ່ງຊາດຮ່ວມກັບຄະນະຮັບຮອງຮ່າງດຳລັດຂອງ ທຫລ;
- ສືບຕໍ່ປັບປຸງຮ່າງລະບຽບວ່າດ້ວຍການລາຍງານແຫຼ່ງທຶນຈົດທະບຽນໂຄງສ້າງຜູ້ຖືຮຸ້ນ ແລະ ຜູ້ໄດ້ຮັບຜົນປະໂຫຍດຂອງບໍລິສັດຫຼັກຊັບ ແລະ ຮ່າງລະບຽບວ່າດ້ວຍການໄດ້ມາ ແລະ ຈຳໜ່າຍຊັບສິນ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ການຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງລັດຖະບານ ທຫລ ປະຈຳປີ 2015 ທີ່ ທຫລ;
- ສືບຕໍ່ການຝຶກຊ້ອມໃຫ້ພ້ອມພຽງກັນຂອງກ້ອນກຳລັງ ທີ່ເດີນທາດຫຼວງ ເພື່ອກະກຽມໃນພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດປີ 2015 ໃນວັນທີ 2 ທັນວາ 2015.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາສີ ພິມມະກອນ